# ສິ່ງທີ່ເປັນພື້ນຖານ

## ກົດໝາຍ

ກົດໝາຍ 152 (2022) **ຫ້າມບໍ່ໃຫ້ຜະລິດ, ຂາຍ ຫຼື ຈຳໜ່າຍສຳລັບການຂາຍ ຫຼື ການນຳໃຊ້ພາຊະນະບັນຈຸອາຫານທີ່ເປັນເຈ້ຍ ທີ່ມີສານ perfluoroalkyl** ແລະ polyfluoroalkyl (ເອີ້ນຮ່ວມກັນວ່າ PFAS).

ສານເຄມີເຫຼົ່ານີ້ແມ່ນຖືກ**ນຳໃຊ້ເພື່ອຜະລິດ**ພາຊະນະບັນຈຸອາຫານທີ່ກັນມັນ, ກັນນ້ຳ, ບໍ່ແມ່ນໄມ້ ແລະ ທົນຕໍ່ຄາບ.

## ເປັນຫຍັງຈຶ່ງຫ້າມ PFAS?

PFAS ແມ່ນສານເຄມີທີ່ບໍ່ຍ່ອຍສະຫຼາຍເມື່ອເວລາຜ່ານໄປ ແລະ ສາມາດກໍ່ຕົວຂຶ້ນໃນສິ່ງແວດລ້ອມ ແລະ ໃນຮ່າງກາຍຂອງພວກເຮົາ, ເຊິ່ງສາມາດເຮັດໃຫ້ມີບັນຫາທາງສຸຂະພາບທີ່ບໍ່ເພິ່ງປາດຖະໜາ. ອາຫານສາມາດມີການເຈືອປົນໄດ້ເມື່ອສຳຜັດກັບພາຊະນະບັນຈຸທີ່ມີ PFAS.



## ຂໍ້ມູນເພີ່ມເຕີມ

*ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ PFAS, ກະລຸນາສະແກນລະຫັດ QR ຫຼື ເຂົ້າເບິ່ງ:*

*https://health.hawaii.gov/food-drug/*

*ນອກຈາກນັ້ນ, ທ່ານຍັງສາມາດໃຊ້ລະຫັດ QR ເພື່ອຊອກຫາໃບປິວໃບນີ້ທີ່ຖືກແປເປັນພາສາ:*

Cebuano
繁體中文
简体中文
Kapasen Chuuk
English
Ōlelo Hawaiʻi
Ilocano
日本語
한국어
ລາວ
Kajin Majeļ
Gagana Samoa
Español
Tagalog
ไทย
Tongan
Tiếng Việt

# ບໍ່ໃຫ້ມີ PFAS



# ການບັນຈຸອາຫານ ພາຍໃນ

ມີຜົນນຳໃຊ້ໃນວັນທີ

31 ທັນວາ 2024

HAWAII STATE DEPARTMENT OF HEALTH

# ລາຍລະອຽດ

## ການຫ້າມ PFAS ມີຜົນບັງຄັບໃຊ້ໃນເວລາໃດ?

**ວັນທີ 31 ທັນວາ 2024**

## ມີການຫ້າມຜະລິດຕະພັນຫຍັງແດ່?

ພາຊະນະບັນຈຸອາຫານທີ່ເປັນເຈ້ຍ ທັງໝົ**ດທີ່ມີ PFAS ແມ່ນຖືກຫ້າມ.**

ຕົວຢ່າງຈຳນວນໜຶ່ງຂອງພາຊະນະບັນຈຸທີ່ຫ້າມບໍ່ໃຫ້ມີ PFAS:

- ເຈ້ຍຫໍ່ ແລະ ເຈ້ຍຮອງ
- ຈານ
- ກ່ອງຮອງອາຫານ
- ກ່ອງພິດຊ້າ



## ສິ່ງນີ້ມີຜົນຕໍ່ຜູ້ໃດ?

ຜູ້ໃຊ້ຜະລິດຕະພັນບັນຈຸອາຫານ:

- ຜູ້ຜະລິດອາຫານ
- ຜູ້ຈຳໜ່າຍ ແລະ ຜູ້ຂາຍຍ່ອຍເຄື່ອງໃຊ້ໃນຫ້ອງຄົວ
- ພາກສ່ວນທີ່ເຮັດວຽກກ່ຽວກັບອາຫານ (ໃຫຍ່ ແລະ ນ້ອຍ)

## ມີທາງເລືອກຫຍັງແດ່?

ກະລຸນາໃຊ້ຜະລິດຕະພັນບັນຈຸທີ່ມີຢູ່ຂອງທ່ານໃຫ້ໝົດ ແລະ ໃຫ້ສັ່ງຜະລິດຕະພັນທີ່ສອດຄ່ອງກັບລະບຽບໃນອະນາຄົດ. ຊອກຫາ ສະຫຼາກທີ່ລະບຸວ່າບໍ່ມີ PFAS **ຫຼື ກວດສອບປະເທດຕົ້ນກຳເນີດ – ພາຊະນ**ະບັນຈຸເກຣດອາຫານທີ່ຜະລິດໃນສະຫະລັດ **ບໍ່ຄວນມີ PFAS ອີກຕໍ່ໄປເນື່ອງຈາກຄວາມພະຍາຍາມຂອງໜ່ວຍງານອ**າຫານ ແລະ ຢາ ສະຫະລັດ (U.S. Food and Drug Administration) ໃນການກຳຈັດການນຳໃຊ້ PFAS ໃນພາຊະນະບັນຈຸອາຫານ. ທ່ານຍັງສາມາດຂໍການຢັ້ງຢືນຈາກຜູ້ຈຳໜ່າຍຂອງທ່ານທີ່ລະບຸວ່າພາຊະນະບັນຈຸສອດຄ່ອງກັບລະບຽບ.

ພາຊະນະບັນຈຸທີ່ເປັນທາງເລືອກປະກອບມີ:

- ຜະລິດຕະພັນເຈ້ຍທີ່ບໍ່ມີການເຄືອບ
- ຜະລິດຕະພັນເຈ້ບເຫຼື້ອມ ຫຼື ເຈ້ຍຮອງເຫຼື້ອມ
- ຜະລິຕະພັນໄບໂອພລາສຕິກ ຫຼື ທີ່ເປັນໂຟມໄບໂອພລາສຕິກ
- ຜະລິດຕະພັນໄຟເບີທີ່ພິມມາທີ່ມີແນວຮອງໄບໂອພລາສຕິກ
- ຜະລິດຕະພັນບັນຈຸທີ່ເປັນເຈ້ຍ (ເຊັ່ນ: ກ່ອງໃສ່ອາຫານ ຫຼື ກ່ອງຮອງອາຫານ) ທີ່ມີການເຄືອບດ້ວຍດິນໜຽວ, ຂີ້ເຜີ້ງ ຫຼື ໄບໂອພລາສຕິກ
- ແຜ່ນ ແລະ ຖົງເຈ້ຍທີ່ມີການເຄືອບດ້ວຍຂີ້ເຜີ້ງ ຫຼື ໄບໂອພລາສຕິກ

ໄບໂອພລາສຕິກແມ່ນຜະລິດຈາກການໃຊ້ໄຂມັນ ຫຼື ນ້ຳມັນພືດ, ແປ້ງສາລີ ແລະ ແຫຼ່ງອື່ນໆທີ່ສາມາດທົດແທນໄດ້.

**ນອກຈາກນັ້ນ, ກະລຸນາເບິ່ງກົດບັນຍັດໃນເຂດປົກຄອງທ້ອງຖິ່ນ ທີ່ຫ້າມບໍ່ໃຫ້ໃຊ້ພາຊ**ະນະບັນຈຸອາຫານທີ່ເປັນພລາສຕິກທີ່ເຮັດຈາກນ້ຳມັນເປັດໂທຣລຽມ, ເຊັ່ນ: ກົດບັນຍັດວ່າດ້ວຍເຄື່ອງໃສ່ອາຫານທີ່ສາມາດຖິ້ມໄດ້ (Disposable Food Ware Ordinance) ຂອງເມືອງ ແລະ ເຂດປົກຄອງໃນ Honolulu.

